ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

ເອກະສານລາຍງານການເງິນ
(ທົບທວນຄືນ)

ສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດ 30 ມິຖຸນາ 2026

ສາລະບານ

	ໜ້າ
ບົດລາຍງານຂອງຜູ້ກວດສອບອິດສະຫຼະໃນການທົບທວນຄືນເອກະສານລາຍງານການເງິນ	1
ໃບລາຍງາຍຖານະການເງິນ	2 - 3
ໃບລາຍງານຜົນໄດ້ຮັບ	4
ໃບລາຍງານສ່ວນປ່ຽນແປງທຶນ	5
ໃບລາຍງານກະແສເງິນສົດ	6 - 7
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ທົບທວນຄືນ ໂດຍຫຍໍ້	8 - 22

ບົດລາຍງານ ຂອງຜູ້ກວດສອບອິດສະຫຼະໃນການທົບທວນຄືນເອກະສານລາຍງານການເງິນກາງປີ

ເຖິງ: ຜູ້ຖືຮຸ້ນ ແລະ ສະພາຜູ້ບໍລິຫານ ຂອງບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ

ພວກຂ້າພະເຈົ້າ ໄດ້ດຳເນີນການທົບທວນຄືນ ຂໍ້ມູນທາງການເງິນ ຂອງບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ (ບໍລິສັດ) ເຊິ່ງປະກອບດ້ວຍໃບລາຍງານຖານະການເງິນ ສິ້ນສຸດວັນທີ 30 ມິຖຸນາ 2026, ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ໃບລາຍງານກະແສເງິນສົດ ສຳລັບໄລຍະຫົກເດືອນສິ້ນສຸດວັນທີດຽວກັນ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນກາງປີໂດຍຫຍໍ້. ຜູ້ບໍລິຫານ ຂອງບໍລິສັດ ມີໜ້າທີຮັບຜິດຊອບໃນການກະກຽມ ແລະ ນຳສະເໜີ ເອກະສານລາຍງານການເງິນເພື່ອໃຫ້ສອດຄ່ອງກັບນະໂຍບາຍການບັນຊີ ຕາມທີ່ໄດ້ກຳນົດໄວ້ໃນບົດອະທິບາຍຊ້ອນທ້າຍໃນຂໍ້ທີ 2 ຂອງເອກະສານລາຍງານການເງິນກາງປີ. ຄວາມຮັບຜິດຊອບຂອງພວກຂ້າພະເຈົ້າຄືການອອກບົດສະຫຼຸບຕໍ່ເອກະສານລາຍງານການເງິນດັ່ງກ່າວບົນພື້ນຖານການທົບທວນຄືນ ຂອງພວກຂ້າພະເຈົ້າ.

ຂອບເຂດ ການທົບທວນຄືນ

ພວກຂ້າພະເຈົ້າໄດ້ດຳເນີນການທົບທວນຄືນ ໂດຍສອດຄ່ອງກັບມາດຕະຖານ ການທົບທວນຄືນແບບສາກົນ 2410 "ການທົບທວນຄືນເອກະສານລາຍງານການເງິນກາງປີ ໂດຍຜູ້ກວດສອບອິດສະຫຼະ". ການທົບທວນຄືນເອກະສານລາຍງານການເງິນ ໄດ້ໃຊ້ວິທີການສອບຖາມບຸກຄະລາກອນທີ່ຮັບຜິດຊອບ ຕໍ່ຝ່າຍບັນຊີ-ການເງິນ ແລະ ໄດ້ດຳເນີນການວິໄຈຂໍ້ມູນ ດ້ານການເງິນທີ່ກ່ຽວຂ້ອງ ແລະ ວິທີການອື່ນໆ. ການທົບທວນຄືນນີ້ມີຂອບເຂດຈຳກັດກວ່າການກວດສອບຕາມມາດຕະຖານການກວດສອບສາກົນ, ສະນັ້ນ, ການທົບທວນຄືນຈຶ່ງບໍ່ສາມາດໃຫ້ຄວາມເຊື່ອໝັ້ນທຽບເທົ່າການກວດສອບ ຕໍ່ສິ່ງທີ່ເປັນສາລະສຳຄັນທັງໝົດ ທີ່ອາດຈະພົບເຫັນໃນການກວດສອບ ຂອງພວກຂ້າພະເຈົ້າໄດ້. ດັ່ງນັ້ນ, ພວກຂ້າພະເຈົ້າຈະບໍ່ສະແດງຄວາມເຫັນບົນພື້ນຖານການກວດສອບ.

ສະຫຼຸບ

ບົນພື້ນຖານ ການທົບທວນຄືນຂອງພວກຂ້າພະເຈົ້າ, ບໍ່ມີຫຍັງທີ່ເປັນສາເຫດໃຫ້ເຊື່ອວ່າ ເອກະສານລາຍງານການເງິນກາງປີດັ່ງກ່າວ ບໍ່ໄດ້ກະກຽມຂໍ້ມູນທີ່ຖືກຕ້ອງຢ່າງເປັນສາລະສຳຄັນ ຕາມນະໂຍບາຍການບັນຊີ ຂອງບໍລິສັດ ທີ່ໄດ້ອະທິບາຍໄວ້ໃນ ບົດອະທິບາຍຂໍ້ທີ 2 ໃນເອກະສານລາຍງານການເງິນນີ້.

ການເນັ້ນຍ້ຳເລື່ອງສຳຄັນ - ພື້ນຖານໃນການສ້າງເອກະສານລາຍງານການເງິນ

ພວກເຮົາຂໍເນັ້ນຍ້ຳໃຫ້ເຫັນເຖິງບົດອະທິບາຍຂໍ້ທີ 2 ຂອງເອກະສານລາຍງານການເງິນກາງປີ ເຊິ່ງອະທິບາຍເຖິງພື້ນຖານໃນການສ້າງເອກະສານລາຍງານການເງິນ. ເອກະສານລາຍງານການເງິນໄດ້ຖືກສ້າງຂຶ້ນຕາມນະໂຍບາຍບັນຊີຂອງບໍລິສັດ ເຊິ່ງອາດມີຄວາມແຕກຕ່າງຈາກມາດຕະຖານການລາຍງານບັນຊີສາກົນ (IFRS). ສຳລັບຮອບໄລຍະບັນຊີເລີ່ມຕົ້ນໃນ ຫຼື ຫຼັງຈາກວັນທີ 1 ມັງກອນ 2026 ເປັນຕົ້ນໄປ, ບັນດາບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບຕ້ອງປະຕິບັດຕາມມາດຕະຖານການລາຍງານບັນຊີສາກົນ IFRS ຢ່າງຄົບຖ້ວນ. ປັດຈຸບັນ, ບໍລິສັດກຳລັງດຳເນີນການຂໍອະນຸຍາດຈາກໜ່ວຍງານກຳກັບດູແລທີ່ກ່ຽວຂ້ອງ ເພື່ອຂໍເລື່ອນການນຳໃຊ້ມາດຕະຖານການລາຍງານບັນຊີສາກົນ IFRS ອອກໄປ. ຂໍ້ສະຫຼຸບຂອງພວກເຮົາບໍ່ໄດ້ຖືກປັບປຸງ ຫຼື ປ່ຽນແປງໃດໆ ອັນເນື່ອງຈາກເລື່ອງນີ້.

ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ

ໂດຍ: ທ່ານ ພິງພັນ ດຳຣິງພັນສຸດິນ
ຮຸ້ນສ່ວນ

ນະຄອນຫຼວງວຽງຈັນ, ສປປ ລາວ
14 ຕຸລາ 2026

ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ
ອາຄານ AGL, ຊັ້ນ 4, ອາຄານເລກທີ 33ຖະໜົນລ້ານຊ້າງ,
ຕູ້ ປ.ນ 7003, ນະຄອນຫຼວງວຽງຈັນ, ສປປ ລາວ,
ໂທ: +856 21 222718-9

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

ໃບລາຍງານຖານະການເງິນ
ສຳລັບໄລຍະຫົກເດືອນສິ້ນສຸດວັນທີ 30 ມິຖຸນາ 2026

	ບິດ ອະທິບາຍ	ທົບທວນຄືນ 30 ມິຖຸນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	4	2,048,983,886	1,449,305,049
ໜີ້ຕ້ອງຮັບທາງການຄ້າ,ສຸດທິ	5	10,068,233,161	7,681,707,215
ເຄື່ອງໃນສາງ,ສຸດທິ	6	361,199,349	392,082,604
ເງິນກູ້ຢືມໄລຍະສັ້ນໃຫ້ພາກສ່ວນທີ່ກ່ຽວຂ້ອງ	21.5	156,855,191,791	152,730,554,156
ຊັບສິນໝຸນວຽນອື່ນໆ	7	578,123,448,164	544,740,472,466
ລວມຊັບສິນໝຸນວຽນທັງໝົດ		**747,457,056,351**	**706,994,121,490**
ຊັບສິນບໍ່ໝຸນວຽນ			
ການລົງທຶນໃນບໍລິສັດໃນເຄືອ	8	198,000,000,000	198,000,000,000
ຊັບສິນເພື່ອການລົງທຶນ,ສຸດທິ	9	410,588,385,114	410,588,385,114
ຊັບສິນບັດຄົງທີ່ມີຕົວຕົນ,ສຸດທິ	10	438,193,498,487	439,826,109,569
ຊັບສິນບັດຄົງທີ່ບໍ່ມີຕົວຕົນ,ສຸດທິ	11	384,938,646	531,683,706
ຊັບສິນບໍ່ໝຸນວຽນອື່ນໆ	12	75,450,866,777	75,398,114,451
ລວມຊັບສິນບໍ່ໝຸນວຽນທັງໝົດ		**1,122,617,689,024**	**1,124,344,292,840**
ລວມຊັບສິນທັງໝົດ		**1,870,074,745,375**	**1,831,338,414,330**

ກະຊວງ ອຸດສາຫະກຳ ແລະ ການຄ້າ
ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ
Petroleum Trading Lao Public Company
ມະຫາຊົນ ຫຼວງ

ທ່ານ ຄຳສອນ ສິດທິໄຊ
ຜູ້ອຳນວຍການ

ວັນທີ: 14 ຕຸລາ 2026

ທ່ານ ນາງ ຈັນທະດອນ ເມກະສະຫວັນ
ຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ: 14 ຕຸລາ 2026

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າ 8 ເຖິງ 22 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ ທົບທວນຄືນ ໂດຍຫຍໍ້

ບໍລິສັດ ປິໂຕຣລັ້ມເທຣດດິ້ງ ລາວ ມະຫາຊົນ

ໃບລາຍງານຖານະການເງິນ
ສຳລັບໄລຍະຫົກເດືອນສິ້ນສຸດວັນທີ 30 ມິຖຸນາ 2026

	ບົດ ອະທິບາຍ	ທົບທວນຄືນ 30 ມິຖຸນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ໜີ້ສິນ ແລະ ທຶນ			
ໜີ້ສິນ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງທາງການຄ້າ	13	10,124,550,476	9,190,812,474
ໜີ້ຕ້ອງສົ່ງອາກອນ	14	3,913,175,791	3,783,573,319
ເງິນກູ້ຢືມໄລຍະສັ້ນ	15	196,045,080,679	198,743,680,873
ໜີ້ສິນໝຸນວຽນອື່ນໆ	16	478,286,104,626	403,001,380,635
ລວມໜີ້ສິນໝຸນວຽນທັງໝົດ		**688,368,911,572**	**614,719,447,301**
ໜີ້ສິນບໍ່ໝຸນວຽນ			
ເງິນກູ້ຢືມໄລຍະຍາວ	15	666,107,863,625	661,278,301,046
ລວມໜີ້ສິນບໍ່ໝຸນວຽນທັງໝົດ		**666,107,863,625**	**661,278,301,046**
ລວມໜີ້ສິນທັງໝົດ		**1,354,476,775,197**	**1,275,997,748,347**
ທຶນ			
ທຶນຈົດທະບຽນທີ່ຖອກແລ້ວ	17	470,000,000,000	470,000,000,000
ສ່ວນເພີ່ມມູນຄ່າຮຸ້ນ		27,638,932,340	27,638,932,340
ສ່ວນເພີ່ມຈາກການຕີມູນຄ່າ		506,179,434,116	506,179,434,116
ກຳໄລ/(ຂາດທຶນ) ສະສົມ			
ຈັດສັນ-ຄັງສະສົມຕາມລະບຽບການ	18	3,708,530,711	3,708,530,711
ຄັງສະສົມອື່ນໆ		1,977,267,979	1,977,267,979
ຂາດທຶນສະສົມລໍຖ້າແບ່ງປັນ		(493,906,194,968)	(454,163,499,163)
ລວມທຶນທັງໝົດ		**515,597,970,178**	**555,340,665,983**
ລວມໜີ້ສິນ ແລະ ທຶນທັງໝົດ		**1,870,074,745,375**	**1,831,338,414,330**

ທ່ານ ຄຳສອນ ສິດທິໄຊ
ຜູ້ອຳນວຍການ

ວັນທີ: 14 ຕຸລາ 2026

ທ່ານ ນາງ ຈັນທະດອນ ເມກສະຫວັນ
ຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ: 14 ຕຸລາ 2026

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າ 8 ເຖິງ 22 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ ທົບທວນຄືນ ໂດຍຫຍໍ້

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

ໃບລາຍງານຖານະການເງິນ
ສຳລັບໄລຍະຫົກເດືອນສິ້ນສຸດວັນທີ 30 ມິຖຸນາ 2026

	ບົດອະທິບາຍ	ທີ່ບທວນຄືນ 30 ມິຖຸນາ 2026 ກີບ	ທີ່ບທວນຄືນ 30 ມິຖຸນາ 2025 ກີບ
ລາຍຮັບ		-	1,143,694,430
ຕົ້ນທຶນຂາຍ		-	(31,514,407)
ກຳໄລເບື້ອງຕົ້ນ		**-**	**1,112,180,023**
ລາຍຮັບອື່ນໆ		10,614,244,373	10,887,443,423
ຂາດທຶນຈາກອັດຕາແລກປ່ຽນ		(3,684,153)	161,036,828
ລາຍຈ່າຍໃນການຂາຍ		-	(56,785,696)
ລາຍຈ່າຍບໍລິຫານ		(11,071,098,710)	(12,139,525,971)
ກຳໄລ(ຂາດທຶນ)ຈາກການດຳເນີນງານ		**(460,538,490)**	**(35,651,392)**
ລາຍຈ່າຍທາງການເງິນ		(39,282,157,315)	(35,062,655,404)
ຂາດທຶນສຸດທິກ່ອນຫັກອາກອນ		**(39,742,695,805)**	**(35,098,306,796)**
ອາກອນກຳໄລ	19	-	
ຂາດທຶນສຸດທິສຳລັບໄລຍະ		**(39,742,695,805)**	**(35,098,306,796)**
ຂາດທຶນຕໍ່ຮຸ້ນ			
ຂາດທຶນ ພື້ນຖານຕໍ່ຮຸ້ນ	20	(169)	(149)

ທ່ານ ສາສອນ ສິດທິໄຊ
ຜູ້ອຳນວຍການ

ວັນທີ: 14 ຕຸລາ 2026

ທ່ານ ນາງ ຈັນທະດອນ ເມກສະຫວັນ
ຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ: 14 ຕຸລາ 2026

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າ 8 ເຖິງ 22 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ ທີ່ບທວນຄືນ ໂດຍຫຍໍ້

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງຂອງທຶນ
ສຳລັບໄລຍະຫົກເດືອນສິ້ນສຸດ ວັນທີ 30 ມິຖຸນາ 2026

	ທຶນຈົດທະບຽນ ທີ່ຖອກແລ້ວ (ບົດອະທິບາຍຂໍ້ 17) ກີບ	ສ່ວນເພີ່ມ ມູນຄ່າຮຸ້ນ ກີບ	ສ່ວນເພີ່ມຈາກການຕີ ມູນຄ່າ ກີບ	ກຳໄລ/(ຂາດທຶນ)ສະສົມ			ລວມ ກີບ
				ຄ້າງສະສົມຕາມ ລະບຽບການ (ບົດອະທິບາຍຂໍ້ 17) ກີບ	ຄ້າງສະສົມອື່ນໆ ກີບ	ຂາດທຶນສະສົມ ລໍຖ້າແບ່ງປັນ ກີບ	
ຍອດຍົກມາໃນວັນທີ 1 ມັງກອນ 2026 – ກວດສອບ	470,000,000,000	27,638,932,340	462,988,363,512	3,708,530,711	1,977,267,979	(375,563,411,139)	590,749,683,403
ຂາດທຶນສຸດທິສຳລັບໄລຍະ	-	-	-	-	-	(35,098,306,796)	(35,098,306,796)
ຍອດເຫຼືອໃນວັນທີ 30 ມິຖຸນາ 2025 – ທົບທວນຄືນ	**470,000,000,000**	**27,638,932,340**	**462,988,363,512**	**3,708,530,711**	**1,977,267,979**	**(410,661,717,935)**	**555,651,376,607**
ຍອດຍົກມາໃນວັນທີ 1 ມັງກອນ 2026 – ກວດສອບ	470,000,000,000	27,638,932,340	506,179,434,116	3,708,530,711	1,977,267,979	(454,163,499,163)	555,340,665,983
ຂາດທຶນສຸດທິສຳລັບໄລຍະ	-	-	-	-	-	(39,742,695,805)	(39,742,695,805)
ຍອດເຫຼືອໃນວັນທີ 30 ມິຖຸນາ 2026 – ທົບທວນຄືນ	**470,000,000,000**	**27,638,932,340**	**506,179,434,116**	**3,708,530,711**	**1,977,267,979**	**(493,906,194,968)**	**515,597,970,178**

ທ່ານ ຄຳສອນ ສີຕິທິໄຊ
ຜູ້ອຳນວຍການ

ວັນທີ: 14 ຕຸລາ 2026

ທ່ານ ນາງ ຈັນທະດອນ ເມກະສະຫວັນ
ຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ: 14 ຕຸລາ 2026

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າ 8 ເຖິງ 22 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ ທົບທວນຄືນ ໂດຍຫຍໍ້

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

ໃບລາຍງານກະແສເງິນສົດ
ສຳລັບໄລຍະຫົກເດືອນສິ້ນສຸດວັນທີ 30 ມິຖຸນາ 2026

	ບົດ ອະທິບາຍ	ທົບທວນຄືນ 30 ມິຖຸນາ 2026 ກີບ	ທົບທວນຄືນ 30 ມິຖຸນາ 2025 ກີບ
ກະແສເງິນສົດຈາກກິດຈະກຳການດຳເນີນງານ:			
ຂາດທຶນສຸດທິກ່ອນຫັກອາກອນກຳໄລສຳລັບໄລຍະ		(39,742,695,805)	(35,098,306,796)
ປັບປຸງເພື່ອສົມທຽບຂາດທຶນສຸດທິກັບເງິນສົດສຸດທິ			
ຄ່າຫຼ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ	10,11	1,964,787,890	1,187,370,561
ສຳຮອງໜີ້ຕ້ອງຮັບທອງຍາກ		(2,424,213,846)	-
ລາຍຮັບດອກເບ້ຍ		(1,468,509,064)	(1,507,132,059)
ລາຍຈ່າຍດອກເບ້ຍ		39,282,157,315	35,062,655,404
ການປ່ຽນແປງໃນການດຳເນີນງານ:			
ໜີ້ຕ້ອງຮັບທາງການຄ້າ		37,687,900	(889,603,992)
ເຄື່ອງໃນສາງ		30,883,255	86,775,738
ໜີ້ຕ້ອງສົ່ງທາງການຄ້າ		933,738,002	(853,877,036)
ໜີ້ຕ້ອງສົ່ງອາກອນ		129,602,472	229,551,695
ຊັບສິນອື່ນໆ		(33,908,141,885)	(13,064,409,213)
ຊັບສິນບໍ່ໝຸນວຽນອື່ນໆ		(52,752,326)	(1,253,123,026)
ໜີ້ສິນອື່ນໆ		36,002,566,677	12,779,347,669
ເງິນສົດທີ່ເກີດຂຶ້ນຈາກ/(ນຳໃຊ້) ການດຳເນີນງານ		**785,110,585**	**(3,320,751,055)**
ເງິນສົດສຸດທິເກີດຂຶ້ນຈາກ/(ນຳໃຊ້) ກິດຈະກຳການດຳເນີນງານ		**785,110,585**	**(3,320,751,055)**
ກະແສເງິນສົດຈາກກິດຈະກຳການລົງທຶນ:			
ການໄດ້ມາຂອງຊັບສິນບັດຄົງທີ່	10	(185,431,748)	(233,286,740)
ເງິນສົດສຸດທິທີ່ໃຊ້ໃນກິດຈະກຳການລົງທຶນ		**(185,431,748)**	**(233,286,740)**

ທ່ານ ຄຳສອນ ສິດທິໄຊ
ຜູ້ອຳນວຍການ

ວັນທີ: 14 ຕຸລາ 2026

ທ່ານ ນາງ ຈັນທະດອນ ເມກສະຫວັນ
ຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ: 14 ຕຸລາ 2026

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າ 8 ເຖິງ 22 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ ທົບທວນຄືນ ໂດຍຫຍໍ້

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

ໃບລາຍງານກະແສເງິນສົດ
ສຳລັບໄລຍະຫົກເດືອນສິ້ນສຸດ ວັນທີ 30 ມິຖຸນາ 2026

	ບົດອະທິບາຍ	ທົບທວນຄືນ 30 ມິຖຸນາ 2026 ກີບ	ທົບທວນຄືນ 30 ມິຖຸນາ 2025 ກີບ
ເພີ່ມຂຶ້ນ/(ຫຼຸດລົງ) ສຸດທິໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		**599,678,837**	**(3,554,037,795)**
ເງິນສົດ ແລະ ລາຍການທຽບເທົ່າເງິນສົດຕົ້ນໄລຍະ	4	1,449,305,049	14,207,853,359
ກຳໄລຈາກອັດຕາແລກປ່ຽນໃນເງິນສົດ ແລະລາຍການທຽບເທົ່າເງິນສົດ		-	8,285,026
ເງິນສົດ ແລະ ລາຍການທຽບເທົ່າເງິນສົດສຳລັບທ້າຍໄລຍະ	**4**	**2,048,983,886**	**10,662,100,590**

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ Petroleum Trading Lao Public Company

ທ່ານ ຄຳສອນ ສິດທິໄຊ
ຜູ້ອຳນວຍການ

ວັນທີ: 14 ຕຸລາ 2026

ທ່ານ ນາງ ຈັນທະດອນ ເມກສະຫວັນ
ຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ: 14 ຕຸລາ 2026

ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ທີ່ຫຍໍ້ ສໍາລັບໄລຍະຫົກເດືອນສິ້ນສຸດ ວັນທີ 30 ມິຖຸນາ 2026

1. ຂໍ້ມູນທົ່ວໄປ

ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (ຕໍ່ໄປນີ້ເອີ້ນວ່າ ບໍລິສັດ) ແມ່ນເປັນບໍລິສັດຈົດທະບຽນ ໃນຕະຫຼາດຫຼັກຊັບລາວ ແລະ ສ້າງຕັ້ງຂຶ້ນໃນ ສປປ ລາວ, ແມ່ນບໍລິສັດທີ່ດໍາເນີນທຸລະກິດ ແລະ ຈົດທະບຽນກັບ ກະຊວງອຸດສາຫະກໍາ ແລະ ການຄ້າ, ລົງວັນທີ 3 ຕຸລາ 2008.

ສໍານັກງານໃຫຍ່ຂອງບໍລິສັດຕັ້ງຢູ່ ຖະໜົນກໍາແພງເມືອງ, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.

ບໍລິສັດໄດ້ລົງທຶນ 99% ໃນບໍລິສັດ ປີໂຕຣເທຣດ ນໍາເຂົ້າ-ສົ່ງອອກ ຈໍາກັດ ແລະ ບໍລິສັດ ປີໂຕຣເທຣດ ຕິສທະບ໊ອຊັນ ຈໍາກັດ ຕາມລໍາດັບ.

ກິດຈະການຫຼັກຂອງບໍລິສັດແມ່ນການເປັນ Holding Company ແລະ ການໃຫ້ບໍລິການ Plus Card. ໃນເດືອນ ມັງກອນ 2025 ບໍລິສັດໄດ້ເຮັດສັນຍາເພື່ອລົບລ້າງຫນີ້ສິນກັບຜູ້ຖືຫຸ້ນໃຫຍ່ກໍ່ຄື ຄອບຄົວ ທ່ານ ສິດທິໄຊ ໂດຍການໂອນຊັບສິນສຸດທິ ຂອງການດໍາເນີນງານ Plus Card. ສັນຍາເບື້ອງຕົ້ນໄດ້ກໍານົດການເຮັດທຸລະກໍານີ້ມີຜົນບັງຄັບໃຊ້ໃນວັນທີ 1 ກໍລະກົດ 2025. ຕໍ່ມາ ໃນເດືອນທັນວາ 2025 ສັນຍາດັ່ງກ່າວໄດ້ຖືກແກ້ໄຂ ໂດຍສັນຍາໃໝ່ໄດ້ມີຜົນບັງຄັບໃຊ້ຕັ້ງແຕ່ວັນທີ 1 ມັງກອນ 2025.

ດັ່ງນັ້ນ ເອກະສານລາຍງານການເງິນສໍາລັບໄລຍະ 6 ເດືອນ ສິ້ນສຸດວັນທີ 30 ມິຖຸນາ 2026 ບໍ່ໄດ້ສະແດງຜົນການດໍາເນີນງານຂອງ Plus Card, ໃນຂະນະທີ່ຜົນການດໍາເນີນງານໄດ້ສະແດງໃນເອກະສານລາຍງານການເງິນສໍາລັບໄລຍະ 6 ເດືອນ ສິ້ນສຸດວັນທີ 30 ມິຖຸນາ 2025.

ເອກະສານລາຍງານການເງິນ ສະບັບນີ້ ໄດ້ຜ່ານການອະນຸມັດ ໂດຍຄະນະຜູ້ອໍານວຍການ ໃນ ວັນທີ 14 ຕຸລາ 2026.

2. ພື້ນຖານໃນການກະກຽມບົດລາຍງານ ແລະ ນະໂຍບາຍການບັນຊີ

ເອກະສານລາຍງານການເງິນ ໄດ້ຖືກສ້າງຂຶ້ນສອດຄ່ອງກັບນະໂຍບາຍການບັນຊີຂອງ ບໍລິສັດທີ່ໄດ້ອະທິບາຍລາຍລະອຽດຕ່າງໆຢູ່ໃນ ເອກະສານລາຍງານການເງິນປະຈໍາປີ ສໍາລັບປີສິ້ນສຸດວັນທີ 31 ທັນວາ 2025. ເອກະສານລາຍງານການເງິນເບື້ອງຕົ້ນນີ້ (ເປັນຕົ້ນ: ໃບລາຍງານຖານະການເງິນ, ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນ ແລະ ໃບລາຍງານກະແສເງິນສົດ) ແມ່ນຖືກນໍາສະເໜີໃນຮູບແບບທີ່ສອດຄ່ອງກັບເອກະສານລາຍງານການເງິນປະຈໍາປີ ໂດຍປະຕິບັດຕາມລະບຽບການລາຍງານ ແລະ ການເປີດເຜີຍທີ່ອອກໂດຍ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

ໃບລາຍງານຖານະການເງິນ ວັນທີ 30 ມິຖຸນາ 2026 ພ້ອມຂໍ້ມູນປຽບທຽບ ວັນທີ 31 ທັນວາ 2025, ໃບລາຍງານຜົນໄດ້ຮັບສໍາລັບໄລຍະ 6 ເດືອນສິ້ນສຸດວັນທີ 30 ມິຖຸນາ 2026 ພ້ອມຂໍ້ມູນປຽບທຽບສໍາລັບ 6 ເດືອນສິ້ນສຸດວັນທີ 30 ມິຖຸນາ 2025, ໃບລາຍງານສ່ວນປ່ຽນແປງທຶນສໍາລັບໄລຍະ 6 ເດືອນສິ້ນສຸດວັນທີ 30 ມິຖຸນາ 2026 ພ້ອມຂໍ້ມູນປຽບທຽບ 6 ເດືອນວັນທີ 30 ມິຖຸນາ 2025, ບົດລາຍງານກະແສເງິນສົດ ສໍາລັບໄລຍະ 6 ເດືອນ ສິ້ນສຸດວັນທີ 30 ມິຖຸນາ 2026 ພ້ອມດ້ວຍຂໍ້ມູນປຽບທຽບສໍາລັບໄລຍະ 6 ເດືອນ ສິ້ນສຸດວັນທີ 30 ມິຖຸນາ 2025 ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ທີ່ຫຍໍ້ ໂດຍຫຍໍ້ ຊຶ່ງໄດ້ຖືກລາຍງານສອດຄ່ອງກັບຫຼັກການການເປີດເຜີຍຂໍ້ມູນໃນເອກະສານລາຍງານການເງິນສໍາລັບປີສິ້ນສຸດວັນທີ 31 ທັນວາ 2025

ເອກະສານລາຍງານການເງິນ ສະບັບນີ້ ຄວນອ່ານຄຸ່ກັບບົດລາຍງານການເງິນປະຈໍາປີ ສໍາລັບປີສິ້ນສຸດວັນທີ 31 ທັນວາ 2025.

2. ພື້ນຖານໃນການກະກຽມບົດລາຍງານ ແລະ ນະໂຍບາຍການບັນຊີ(ຕໍ່)

ອີງຕາມກົດໝາຍບັນຊີສະບັບເລກທີ 47/ສພຊ ລົງວັນທີ 26 ທັນວາ 2013, ວິສາຫະກິດ ທີ່ຮັບໃຊ້ຜົນປະໂຫຍດສາທາລະນະ (PIEs) ຕ້ອງປະຕິບັດມາດຕະຖານການລາຍງານການເງິນສາກົນ (IFRS), ເຖິງຢ່າງໃດກໍ່ຕາມ, ກະຊວງການເງິນໄດ້ອອກແຈ້ງການ ສະບັບເລກທີ 1137/ກງ ລົງວັນທີ 27 ເມສາ 2020 ແລະ ຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ) ລົງວັນທີ 25 ພຶດສະພາ 2020, ຊຶ່ງໃຫ້ທາງເລືອກສຳລັບ PIEs ໃນການຈັດການເຮັດແຜນປະຕິບັດການ ສຳລັບການນຳ IFRS ເຖິງວັນທີ 31 ທັນວາ 2025, ດັ່ງນັ້ນ ບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບຕ້ອງປະຕິບັດ IFRS ຢ່າງເຕັມຮູບແບບໃນວັນທີ 1 ມັງກອນ 2026 ເປັນຕົ້ນໄປ.

ເຖິງແມ່ນວ່າວິສາຫະກິດທີ່ມີຜົນປະໂຫຍດຕໍ່ສາທາລະນະ (Public Interest Enterprises) ໂດຍສະເພາະບໍລິສັດຈົດທະບຽນ ຖືກກຳນົດໃຫ້ນຳໃຊ້ ມາດຕະຖານການລາຍງານທາງການເງິນສາກົນ (IFRS) ຕັ້ງແຕ່ປີ 2026 ເປັນຕົ້ນໄປ, ແຕ່ບໍລິສັດຍັງບໍ່ ສາມາດດຳເນີນການນຳໃຊ້ IFRS ໃຫ້ສຳເລັດໄດ້ ນະ ວັນທີອອກເອກະສານລາຍງານການເງິນ. ປັດຈຸບັນ ບໍລິສັດກຳລັງດຳເນີນການ ຂໍອະນຸຍາດຈາກອົງການກຳກັບດູແລທີ່ກ່ຽວຂ້ອງ ເພື່ອຂໍຂະຫຍາຍກຳນົດເວລາໃນການນຳໃຊ້ IFRS. ຈົນກວ່າການນຳໃຊ້ດັ່ງກ່າວຈະ ແລ້ວສຳເລັດ, ເອກະສານລາຍງານການເງິນທີ່ນຳສະເໜີນີ້ຈະປະຕິບັດຕາມນະໂຍບາຍບັນຊີທີ່ບໍລິສັດນຳໃຊ້ຢູ່ໃນປັດຈຸບັນ ແລະ ນຳ ໃຊ້ຈາກປີກ່ອນ. ດັ່ງນັ້ນ ເອກະສານລາຍງານການເງິນນີ້ອາດຈະຍັງບໍ່ປະຕິບັດຕາມຂໍ້ກຳນົດຂອງ IFRS ຢ່າງຄົບຖ້ວນ ໃນດ້ານການ ຮັບຮູ້ລາຍການ, ການວັດມູນຄ່າ, ການນຳສະເໜີ ແລະ ການເປີດເຜີຍຂໍ້ມູນ.

3. ການຄາດຄະເນ

ການສ້າງເອກະສານລາຍງານການເງິນ ທີ່ຍທວນຄືນ ແມ່ນຜູ້ບໍລິຫານຈຳເປັນຕ້ອງມີການຕັດສິນໃຈ ການຄາດຄະເນ ແລະ ການສົມມຸດ ຕິຖານ ທີ່ມີຜົນກະທົບຕໍ່ນະໂຍບາຍການບັນຊີ ແລະ ການລາຍງານຕົວເລກຂອງຊັບສິນ ແລະ ໜີ້ສິນ, ລາຍຮັບ ແລະ ລາຍຈ່າຍ ເຊິ່ງ ໃນຄວາມເປັນຈິງອາດຈະມີຄວາມແຕກຕ່າງຈາກການຄາດຄະເນໄວ້.

ໃນການກະກຽມເອກະສານລາຍງານການເງິນ ທີ່ຍທວນຄືນ ຜູ້ບໍລິຫານມີການຕັດສິນໃຈໃນການນຳໃຊ້ນະໂຍບາຍການບັນຊີຂອງ ບໍລິສັດ ແລະ ແຫຼ່ງທີ່ມາອັນສຳຄັນໃນການຄາດຄະເນທີ່ບໍ່ແນ່ນອນເຊັ່ນດຽວກັນກັບຫຼັກການທີ່ໃຊ້ສຳລັບການສ້າງເອກະສານລາຍງານ ການເງິນ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2025.

4. ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

	ທີ່ບທວນຄືນ 30 ມິຖຸນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ເງິນສົດ	15,000,000	15,000,000
ເງິນສົດໃນທະນາຄານ	2,033,983,886	1,434,305,049
	2,048,983,886	**1,449,305,049**

5. ໜີ້ຕ້ອງຮັບທາງການຄ້າ-ສຸດທິ

	ທີ່ບທວນຄືນ 30 ມິຖຸນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ໜີ້ຕ້ອງຮັບທາງການຄ້າ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 21.3)	10,049,175,034	10,049,175,034
ໜີ້ຕ້ອງຮັບທາງການຄ້າ - ພາກສ່ວນອື່ນ	4,704,320,659	4,742,008,559
	14,753,495,693	**14,791,183,593**
ຫັກ: ສຳຮອງບັນຊີໜີ້ສົງໄສຈະເສຍ	(4,685,262,532)	(7,109,476,378)
ໜີ້ຕ້ອງຮັບທາງການຄ້າ - ສຸດທິ	**10,068,233,161**	**7,681,707,215**

6. ເຄື່ອງໃຊ້ສຳນັກງານ, ສຸດທິ

	ທີ່ບທວນຄືນ 30 ມິຖຸນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ເຄື່ອງໃຊ້ຫ້ອງການ	361,199,349	392,082,604
	361,199,349	**392,082,604**

ບໍ່ໄດ້ຕັ້ງສຳຮອງສິນຄ້າຄົງຄ້າງສາງ ນະວັນທີ 30 ມິຖຸນາ 202 6ເນື່ອງຈາກສິນຄ້າຄົງຄ້າງສາງສ່ວນໃຫຍ່ເປັນອຸປະກອນຮັບໃຊ້ຫ້ອງການທີ່ຖືກນຳໃຊ້ ແລະ ຖືກເພີ່ມເຕີມຢ່າງສະໝ່ຳສະເໝີໃນການດຳເນີນງານປົກກະຕິ ແລະ ມີໝຸນວຽນຕະຫຼອດ.

7. ຊັບສິນໝຸນວຽນອື່ນໆ

	ທີ່ບທວນຄືນ 30 ມິຖຸນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ໜີ້ຕ້ອງຮັບອື່ນໆ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 21.3)	208,510,618,228	197,504,052,264
ເງິນຈ່າຍລ່ວງໜ້າໃຫ້ຜູ້ສະໜອງ	1,777,279,003	1,723,428,462
ຈ່າຍລ່ວງໜ້າ	1,075,531,948	1,443,708,049
ເງິນຈ່າຍມັດຈຳໃຫ້ຜູ້ສະໜອງ	4,252,084,600	4,177,444,645
ເງິນຈ່າຍລ່ວງໜ້າໃຫ້ພະນັກງານ	62,000,000	97,000,000
ເງິນຈ່າຍລ່ວງໜ້າສຳລັບອາກອນກຳໄລ	1,146,854,492	1,146,854,492
ຂາດທຶນລໍຖ້າຕັດບັນຊີຈາກອັດຕາແລກປ່ຽນທີ່ບໍ່ເກີດຂຶ້ນຈິງ	361,299,079,893	338,647,984,554
	578,123,448,164	**544,740,472,466**

8. ການລົງທຶນໃນບໍລິສັດໃນເຄືອ

	ທີ່ບທວນຄືນ 30 ມິຖຸນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ວັນທີ 1 ມັງກອນ	198,000,000,000	198,000,000,000
ເພີ່ມຂຶ້ນ	-	-
	198,000,000,000	**198,000,000,000**

ມູນຄ່າທີ່ຮັບຮູ້ໃນໃບລາຍງານຖານະການເງິນມີດັ່ງລຸ່ມນີ້:

ຊື່ວິສະຫະກິດ	ດຳເນີນງານໃນ ປະເທດ	ກິດຈະກຳຂອງ ທຸລະກິດ	ສ່ວນເປັນເຈົ້າຂອງ ຖືໂດຍ ບໍລິສັດ		ສ່ວນເປັນເຈົ້າຂອງ ຖືໂດຍ ຜູ້ຖືຮຸ້ນ ສ່ວນນ້ອຍ		ການລົງທຶນໃນວິທີຕົ້ນທຶນ	
			2026 (%)	2025 (%)	2026 (%)	2025 (%)	2026 ກີບ	2025 ກີບ
ບໍລິສັດ ປິໂຕຣເທຣດ ນຳເຂົ້າ-ສົ່ງອອກ ຈຳກັດ	ສ.ປ.ປ ລາວ	ນຳເຂົ້າ ແລະ ສົ່ງ ອອກ	99%	99%	1%	1%	148,500,000,000	148,500,000,000
ບໍລິສັດ ປິໂຕຣເທຣດ ດິສທະບິວຊັ່ນ ຈຳກັດ	ສ.ປ.ປ ລາວ	ຂາຍຍ່ອຍ ແລະ ຂາຍສົ່ງ	99%	99%	1%	1%	49,500,000,000	49,500,000,000

9. ຊັບສິນເພື່ອການລົງທຶນ, ສຸດທິ

	ກີບ
ໃນວັນທີ 1 ມັງກອນ 2026 - ກວດສອບ	410,588,385,114
ຫັກ: ຄ່າຫຼ້ຍຫ້ຽນ	-
ມູນຄ່າຍັງເຫລືອຕາມບັນຊີສຸດທີ ໃນວັນທີ 30 ມິຖຸນາ 2026 - ທີ່ບທວນຄືນ	**410,588,385,114**

ຊັບສິນເພື່ອການລົງທຶນບາງລາຍການ ໄດ້ນຳໄປເປັນຫຼັກຊັບຄ້ຳປະກັນສຳລັບເງິນກູ້ຢືມ (ບົດອະທິບາຍ 15).

10. ຊັບສິນບັດຄົງທີ່ມີຕົວຕົນ, ສຸດທິ

	ກີບ
ໃນວັນທີ 1 ມັງກອນ 2026 - ກວດສອບ	439,826,109,569
ເພີ່ມຂຶ້ນ	185,431,748
ຫັກ: ຄ່າຫຼ້ຍຫ້ຽນ	(1,818,042,830)
ມູນຄ່າຍັງເຫລືອຕາມບັນຊີສຸດທີ ໃນວັນທີ 30 ມິຖຸນາ 2026 - ທີ່ບທວນຄືນ	**438,193,498,487**

ຊັບສິນບັດຄົງທີ່ມີຕົວຕົນບາງລາຍການ ໄດ້ນຳໄປເປັນຫຼັກຊັບຄ້ຳປະກັນສຳລັບເງິນກູ້ຢືມ (ບົດອະທິບາຍ 15).

11. ຊັບສິນບັດຄົງທີ່ບໍ່ມີຕົວຕົນ, ສຸດທິ

	ກີບ
ໃນວັນທີ 1 ມັງກອນ 2026 - ກວດສອບ	531,683,706
ຫັກ: ຄ່າເສື່ອມມູນຄ່າ	(146,745,060)
ມູນຄ່າຍັງເຫລືອຕາມບັນຊີສຸດທີ ໃນວັນທີ 30 ມິຖຸນາ 2026 - ທີ່ບທວນຄືນ	**384,938,646**

12. ຊັບສິນບໍ່ໝຸນວຽນອື່ນໆ

	ທີ່ຍທວນຄືນ 30 ມິຖຸນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ຈ່າຍລ່ວງໜ້າ*	50,276,093,167	50,981,485,231
ຈ່າຍລ່ວງໜ້າສຳລັບການລົງທຶນ**	24,225,242,997	23,454,842,997
ຈ່າຍລ່ວງໜ້າສຳລັບສະຖານີປ້ຳນ້ຳມັນ ແລະ ອື່ນໆ	949,530,613	961,786,223
	75,450,866,777	**75,398,114,451**

*ສ່ວນໃຫຍ່ແມ່ນປະກອບມີຈ່າຍລ່ວງໜ້າໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງຈຳນວນ: 34,419,839,505 ກີບ (2025: 34,419,839,505 ກີບ) (ບົດອະທິບາຍຂໍ້ທີ 21.3).

**ຈ່າຍລ່ວງໜ້າສຳລັບການລົງທຶນສ່ວນໃຫຍ່ແມ່ນການຈ່າຍເງິນໃຫ້ແກ່ທີ່ປຶກສາພາຍນອກ ແລະ ລັດຖະບານ ເປັນເງິນລ່ວງໜ້າສຳລັບການລົງທຶນໃນໂຄງການຕ່າງໆດັ່ງລຸ່ມນີ້:

- ໂຄງການທາງລົດໄຟ ວຽງຈັນ - ຫວຽ ອໍ້ງ": ເຊິ່ງໃນປັດຈຸບັນ ໂຄງການ ແມ່ນຢູ່ໃນຂັ້ນຕອນການສຶກສາ ແລະ ພັດທະນຄວາມເປັນໄປໄດ້.

- ໂຄງການ Tank farm ນ້ຳມັນໃນລາວ: ເຊິ່ງເປັນການລົງທຶນລະຫວ່າງ ກຸ່ມບໍລິສັດ ແລະ ບໍລິສັດ Muhibbar Engineering ຈຳກັດ, ໃນປັດຈຸບັນແມ່ນຢູ່ໃນຂັ້ນຕອນການສຶກສາ ແລະ ພັດທະນາຄວາມເປັນໄປໄດ້.

- ໂຄງການ Tank farm ນ້ຳມັນໃນຫວຽດນາມ: ເຊິ່ງໃນປັດຈຸບັນ ໂຄງການ ແມ່ນຢູ່ໃນຂັ້ນຕອນການສຶກສາ ແລະ ພັດທະນາຄວາມເປັນໄປໄດ້.

13. ໜີ້ຕ້ອງຮັບທາງການຄ້າ

	ທົບທວນຄືນ 30 ມິຖຸນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ໜີ້ຕ້ອງຮັບການຄ້າ - ພາກສ່ວນອື່ນ	3,839,342,565	4,148,647,699
ໜີ້ຕ້ອງຮັບການຄ້າ - ພາກສ່ວນກ່ຽວຂ້ອງ (ບົດອະທິບາຍຂໍ້ 21.3)	6,285,207,911	5,042,164,775
	10,124,550,476	**9,190,812,474**

14. ໜີ້ຕ້ອງຈ່າຍອາກອນ

	ທົບທວນຄືນ 30 ມິຖຸນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ໜີ້ຕ້ອງຈ່າຍອາກອນມູນຄ່າເພີ່ມ	3,670,068,820	3,676,361,150
ໜີ້ຕ້ອງຈ່າຍອາກອນລາຍໄດ້ສ່ວນບຸກຄົນ	243,106,971	107,212,169
	3,913,175,791	**3,783,573,319**

ເຈົ້າໜ້າທີ່ອາກອນໄດ້ກວດກາ ແລະ ອອກປົດບັນທຶກກ່ຽວກັບພັນທະຂອງຄ່າໃຊ້ຈ່າຍອາກອນ ສຳລັບ ສົກປີ 2014 - 2017 ຈຳນວນ ເງິນ 20,835,576,105 ກີບ. ພ້ອມກັນນີ້, ເຈົ້າໜ້າທີ່ອາກອນໄດ້ລະບຸໃນປົດບັນທຶກວ່າບໍລິສັດອາດຈະມີພັນທະໃນການຈ່າຍຄ່າ ປັບໄໝ ສຳລັບ ສົກປີ 2014 ຫາ 2017 ຈຳນວນເງິນ 7,417,484,961 ກີບ ເຊິ່ງຈຳນວນດັ່ງກ່າວແມ່ນຍັງບໍ່ສາມາດຕັດສິນໄດ້ ແລະ ຈຳເປັນໄດ້ຂໍຄຳເຫັນຈາກກະຊວງການເງິນ.

ກ່ຽວກັບພັນທະໜີ້ຕ້ອງຮັບຄ່າປັບໄໝ ແຕ່ປີ 2014 ຫາ 2017 ຈຳນວນ 7,417,484,961 ກີບ, ບໍລິສັດ ໄດ້ຮັບປົດບັນທຶກຈາກກົມ ສ່ວຍສາອາກອນ ອີງຕາມເອກະສານອ້າງອີງ ເລກທີ 0210 ລົງວັນທີ 28 ມັງກອນ 2020, ບາງສ່ວນຂອງພັນທະຄ່າປັບໄໝ ຂອງປີ 2014 ຫາ 2017 ຈຳນວນ 964,759,679 ກີບ ໄດ້ຮັບອະນຸຍາດໃຫ້ຍົກເວັ້ນ. ດັ່ງນັ້ນ, ໃນວັນທີ 30 ມິຖຸນາ 2026 ບໍລິສັດ ມີ ພັນທະໜີ້ຄ່າປັບໄໝທີ່ຍັງສະຫຼຸບບໍ່ໄດ້ ແລະ ຕ້ອງຂໍຄຳຄິດເຫັນ ສຸດທ້າຍຈາກກະຊວງການເງິນ ຈຳນວນ 6,452,725,282 ກີບ (2025: 6,452,725,282 ກີບ).

ໃນຂະນະດຽວກັນ, ຜູ້ບໍລິຫານ ພວມດຳເນີນການຂໍການຍົກເວັ້ນພັນທະດັ່ງກ່າວ. ເນື່ອງຈາກວ່າຍັງບໍ່ມີຄວາມແນ່ນອນຂອງຈຳນວນທີ່ ຈະຖືກປັບໄໝ, ຜູ້ບໍລິຫານຈຶ່ງໄດ້ພິຈາລະນາບໍ່ບັນທຶກໜີ້ຕ້ອງຮັບ ຄ່າປັບໄໝ ຈຳນວນ 6,452,725,282 ກີບ (2025: 6,452,725,282 ກີບ) ເຂົ້າໃນເອກະສານລາຍງານການເງິນ.ໃນວັນທີລາຍງານການເງິນ ແມ່ນຢູ່ໃນຂັ້ນຕອນການກວດກາ ໂດຍ ເຈົ້າໜ້າທີ່ສ່ວຍສາອາກອນ

15. ເງິນກູ້ຢືມ

	ທີ່ບທວນຄືນ 30 ມິຖຸນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ໝຸນວຽນ		
ເງິນກູ້ຢືມໄລຍະຍາວໝຸນວຽນຈາກພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 21.4)	8,235,000,000	8,261,400,000
ເງິນກູ້ຢືມຈາກພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 21.4)	187,810,080,679	190,482,280,873
	196,045,080,679	**198,743,680,873**
ບໍ່ໝຸນວຽນ		
ເງິນກູ້ຢືມຈາກທະນາຄານ	35,807,496,929	500,962,346,150
ເງິນກູ້ຢືມຈາກພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 21.4)	630,300,366,696	160,315,954,896
	666,107,863,625	**661,278,301,046**
	862,152,944,304	**860,021,981,919**

ການເຄື່ອນໄຫວຂອງເງິນກູ້ຢືມສາມາດວິເຄາະໄດ້ດັ່ງລຸ່ມນີ້

	ທີ່ບທວນຄືນ 30 ມິຖຸນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ວັນທີ 1 ມັງກອນ	860,021,981,919	826,345,447,375
ເງິນກູ້ຢືມໄດ້ຊຳລະຄືນພາຍໃນໃນລະຫວ່າງໄລຍະ	-	(8,349,720,000)
ຂາດທຶນຈາກອັດຕາແລກປ່ຽນທີ່ຍັງບໍ່ເກີດຂຶ້ນຈິງ	2,130,962,385	42,026,254,544
	862,152,944,304	**860,021,981,919**

15. ເງິນກູ້ຢືມ (ຕໍ່)

ຜູ້ໃຫ້ກູ້ຢືມ	ເງື່ອນໄຂການຊຳລະ	ໄລຍະເວລາເບື້ອງຕົ້ນ	ວົງເງິນກູ້	ອັດຕາດອກເບ້ຍຕໍ່ປີ	ຫຼັກຊັບຄ້ຳປະກັນ	ຍອດເຫຼືອໃນວັນທີ 30 ມິຖຸນາ 2026
ບໍລິສັດ ບິວລະພາ ຈຳກັດ	ຕົ້ນທຶນ ແລະ ດອກເບ້ຍຈະຕ້ອງຊຳລະຕາມການຮຽກຮ້ອງຂອງຜູ້ໃຫ້ກູ້	29 ທັນວາ 2019 ເປັນຕົ້ນໄປ	4,398,535 ໂດລາ	0%	ບໍ່ມີ	3,324,369 ໂດລາ (ທຽບເທົ່າ 74,951,224,375 ກີບ)
ບໍລິສັດ ປິໂຕຣເທຣດ ນຳເຂົ້າ-ສົ່ງອອກ ຈຳກັດ	ຕົ້ນທຶນ ແລະ ດອກເບ້ຍຈະຕ້ອງຊຳລະຕາມການຮຽກຮ້ອງຂອງຜູ້ໃຫ້ກູ້	11 ເມສາ 2023 ເປັນຕົ້ນໄປ	66,697,256,733 ກີບ	10%	ບໍ່ມີ	54,276,256,732 ກີບ
ບໍລິສັດ ປິໂຕຣເທຣດ ນຳເຂົ້າ-ສົ່ງອອກ ຈຳກັດ	ຕົ້ນທຶນ ແລະ ດອກເບ້ຍຈະຕ້ອງຊຳລະຕາມການຮຽກຮ້ອງຂອງຜູ້ໃຫ້ກູ້	25 ທັນວາ 2021 ເປັນຕົ້ນໄປ	1,302,300 ໂດລາ 51,51,000 ບາດ	9%	ບໍ່ມີ	1,302,300 ໂດລາ 51,951,000 ບາດ (ທຽບເທົ່າ 65,013,029,550 ກີບ)
ບໍລິສັດ ປິໂຕຣເທຣດ ນຳເຂົ້າ-ສົ່ງອອກ ຈຳກັດ	ຕົ້ນທຶນ ແລະ ດອກເບ້ຍຈະຕ້ອງຊຳລະຕາມໃນມື້ຄົບກຳນົດ	25 ທັນວາ 2023 – 25 ທັນວາ 2028	160,315,954,896 ກີບ	0%	ບໍ່ມີ	160,315,954,896 ກີບ
ທະນາຄານ ພັງສະຫວັນ	ຕົ້ນທຶນ: ຊຳລະທຸກເດືອນຕາມ "ຕາຕະລາງຊຳລະເງິນກູ້" ດອກເບ້ຍ: ຊຳລະທຸກເດືອນ	26 ທັນວາ 2024 – 26 ທັນວາ 2029	752,900,000 ບາດ	11%	- ດິນ ແລະ ອາຄານ 11 ແຫ່ງ - ສັນຍາສະໜອງນ້ຳມັນແກ່ບໍລິສັດ ພຸເບ້ຍ ຈຳກັດ, ບໍລິສັດ ຢຸນນານ ການກໍ່ສ້າງ ແລະ ການລົງທຶນ (ລາວ) ຈຳກັດຜູ້ດຽວ - ດິນ ແລະ ປ້ຳນ້ຳມັນ 7 ແຫ່ງ ຂອງບໍລິສັດ ດີສທີບິວຊັນ ຈຳກັດ - ດິນ ແລະ ປ້ຳນ້ຳມັນ 9 ແຫ່ງ ຂອງບໍລິສັດ ປິໂຕລ້ຽມ ເທດດິ້ງລາວ ມະຫາຊົນ	739,667,000 ບາດ (ທຽບເທົ່າ 507,596,478,750 ກີບ)
					ລວມ	**4,626,669 ໂດລາ 791,618,000 ບາດ 214,592,211,629 ກີບ (ທຽບເທົ່າ 862,152,944,304 ກີບ)**

15. ເງິນກູ້ຢືມ (ຕໍ່)

ອັດຕາດອກເບ້ຍທີ່ກ່ຽວຂ້ອງກັບເງິນກູ້ຢືມຂອງບໍລິສັດມີດັ່ງນີ້:

	ທີ່ບທວນຄືນ 30 ມິຖຸນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ເງິນກູ້ຢືມ		
- ອັດຕາດອກເບ້ຍຄົງທີ່	862,152,944,304	860,021,981,919
ເງິນກູ້ຢືມທັງໝົດ	**862,152,944,304**	**860,021,981,919**

ມູນຄ່າສັນຍາເງິນກູ້ຢືມແບ່ງຕາມມື້ຄົບກຳນົດມີດັ່ງຕໍ່ໄປນີ:

	ທີ່ບທວນຄືນ 30 ມິຖຸນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ໄລຍະລະຫວ່າງ 1 ປີ ຫາ 2 ປີ	196,045,080,679	198,743,680,873
ໄລຍະລະຫວ່າງ 2 ປີ ຫາ 5 ປີ	666,107,863,625	661,278,301,046
	862,152,944,304	**860,021,981,919**

16. ໜີ້ສິນໝຸນວຽນອື່ນໆ

	ທີ່ບທວນຄືນ 30 ມິຖຸນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ເງິນຮັບລ່ວງໜ້າຈາກລູກຄ້າ	1,507,592,909	1,430,986,536
ໜີ້ຕ້ອງສົ່ງອື່ນໆ	8,384,372,705	7,612,578,149
ໜີ້ຕ້ອງສົ່ງອື່ນໆ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 21.3)	413,016,088,276	344,049,464,237
ກຳໄລລໍຖ້າຕັດບັນຊີຈາກອັດຕາແລກປ່ຽນທີ່ບໍ່ເກີດຂຶ້ນຈິງ	55,378,050,736	49,908,351,713
	478,286,104,626	**403,001,380,635**

17. ທຶນຈົດທະບຽນ

ຮຸ້ນຂອງບໍລິສັດ (ພາຍໃຕ້ສັນຍາລັກ "PTL") ແມ່ນໄດ້ລົງທະບຽນໃນຕະຫຼາດຫຼັກຊັບລາວຢ່າງເປັນທາງການນັບຕັ້ງແຕ່ວັນທີ 10 ທັນວາ 2014 ຕາມໃບອະນຸຍາດສະບັບເລກທີ 005 ລົງວັນທີ 26 ພະຈິກ 2014. ຮຸ້ນທັງໝົດໃນວັນທີ 30 ມິຖຸນາ 2026 ມີຈຳນວນ 235,000,000 ຮຸ້ນ ເຊິ່ງມີມູນຄ່າຮຸ້ນລະ 2,000 ກີບ.

ໃນໄລຍະຫົກເດືອນຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2026 ແມ່ນບໍ່ໄດ້ມີການຫຼຸດ ຫຼື ອອກຮຸ້ນເພີ່ມ.

18. ຄັງສະສົມຕາມລະບຽບການ

ຄັງສະສົມຕາມລະບຽບການ ແມ່ນສ້າງຂຶ້ນຕາມກົດໝາຍວິສາຫະກິດຂອງ ສປປ ລາວ ເຊິ່ງກຳນົດໃຫ້ ບໍລິສັດ ຕັ້ງຄັງສະສົມຕາມ ລະບຽບການ ຢ່າງຕ່ຳ 10% ຂອງກຳໄລສຸດທິໃນປີ ຈົນຄັງສະສົມຕາມລະບຽບການຄົບ 50% ຂອງມູນຄ່າທຶນຈົດທະບຽນ.

ໃນໄລຍະຫົກເດືອນຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2026 ແມ່ນບໍ່ໄດ້ມີການປ່ຽນແປງ ເທົ່າກັບ 3,708,530,711 ກີບ (2025: 3,708,530,711 ກີບ).

19. ອາກອນລາຍໄດ້

ອີງຕາມກົດໝາຍສ່ວຍສາອາກອນ ເລກທີ 259 ທີ່ມີຜົນບັງຄັບໃຊ້ໃນ ວັນທີ 1 ມັງກອນ 2020. ບໍລິສັດໄດ້ຄຳນວນອາກອນກຳໄລ ໂດຍອີງຕາມກຳໄລສຸດທິ ໃນອັດຕາ 20% (2025: 20%) ພາຍຫຼັງທີ່ໄດ້ພິຈາລະນາລາຍຮັບ ແລະ ລາຍຈ່າຍທີ່ບໍ່ອະນຸຍາດ ເຊິ່ງໄດ້ ລະບຸໃນກົດໝາຍວ່າດ້ວຍອາກອນລາຍໄດ້.

ໃນ ສປປ ລາວ, ການສົ່ງຄືນອາກອນກຳໄລແມ່ນຈະໄດ້ຮັບການທົບທວນຢ່າງລະອຽດ ໂດຍເຈົ້າໜ້າທີ່ສ່ວຍສາອາກອນ. ນອກຈາກນີ້, ບັນຫາອາກອນທີ່ເພີ່ມຂຶ້ນໃນການກວດສອບອາດຕ້ອງໃຊ້ການຕັດສິນ ແລະ ພິຈາລະນາຈາກພາກສ່ວນທີ່ກ່ຽວຂ້ອງ.

ການທົບທວນຄືນສາມາດສົ່ງຜົນຕໍ່ການຊຳລະອາກອນເພີ່ມເຕີມ ຫຼື ອາດຈຳເປັນຕໍ່ການສົ່ງເງິນຄືນທີ່ສຳຄັນ. ເຊິ່ງຈະສົ່ງຜົນເຮັດ ໃຫ້ການຊຳລະເງິນ ຫຼື ສົ່ງຄືນເງິນ ຖືກບັນທຶກເປັນ ດັດປັບອາກອນກຳໄລໃນປີທີ່ສຳເລັດການທົບທວນຄືນ.

20. ຂາດທຶນ ພື້ນຖານຕໍ່ຮຸ້ນ

ພື້ນຖານການຄິດໄລ່ຂາດທຶນ ຕໍ່ຮຸ້ນ ຄິດໄລ່ຈາກການແບ່ງຂາດທຶນສຸດທິທີ່ເປັນສ່ວນຂອງຜູ້ຖືຮຸ້ນດ້ວຍ ຍອດເຫຼືອຂອງຈຳນວນຮຸ້ນ ສາມັນ.

	ທົບທວນຄືນ 30 ມິຖຸນາ 2026 ກີບ	ທົບທວນຄືນ 30 ມິຖຸນາ 2025 ກີບ
ຂາດທຶນສຸດທິ ຂອງຮຸ້ນສາມັນ (ກີບ)	(39,742,695,805)	(35,098,306,796)
ຍອດເຫຼືອຈຳນວນຮຸ້ນສາມັນ (ຮຸ້ນ)	235,000,000	235,000,000
ຂາດທຶນພື້ນຖານຕໍ່ຮຸ້ນ (ກີບ)	(169)	(149)

21. ລາຍການເຄື່ອນໄຫວຂອງພາກສ່ວນທີ່ກ່ຽວຂ້ອງ

ນິຕິບຸກຄົນ ແລະ ບຸກຄົນ ທີ່ກ່ຽວຂ້ອງທາງກົງ ຫຼື ທາງອ້ອມ ພາຍໃຕ້ການຄວບຄຸມຂອງບໍລິສັດ ລວມເຖິງການລົງທຶນໃນນິຕິບຸກຄົນ ແລະ ບຸກຄົນ ຫຼື ນິຕິບຸກຄົນ ມີອິດທິພົນຫຼາຍຕໍ່ກັບບໍລິສັດ. ຜູ້ບໍລິຫານຫຼັກ ລວມມີ ຜູ້ອຳນວຍການ ແລະ ພະນັກງານຂອງບໍລິສັດ ແລະ ສະມາຊິກໃກ້ຊິດໃນຄອບຄົວຂອງບຸກຄົນເຫຼົ່ານີ້ ລວມເຖິງບັນດາບໍລິສັດ ທີ່ກ່ຽວຂ້ອງກັບບຸກຄົນເຫຼົ່ານີ້ ແມ່ນຖືເປັນພາກສ່ວນທີ່ກ່ຽວຂ້ອງ.

ໃນການພິຈາລະນາ ຄວາມເປັນໄປໄດ້ໃນສາຍສຳພັນຂອງພາກສ່ວນທີ່ກ່ຽວຂ້ອງແມ່ນພິຈາລະນາເຖິງ ສາຍສຳພັນທີ່ແທ້ຈິງ, ບໍ່ໄດ້ພິຈາລະນາພຽງແຕ່ໃນຮູບແບບຂອງກົດໝາຍເທົ່ານັ້ນ.

ລາຍການຕໍ່ໄປນີ້ແມ່ນລາຍການສາລະສຳຄັນທີ່ກ່ຽວກັບພາກສ່ວນທີ່ກ່ຽວຂ້ອງ:

21.1 ຂາຍສິນຄ້າ ແລະ ບໍລິການ

	ທີ່ບທວນຄືນ 30 ມິຖຸນາ 2026 ກີບ	ທີ່ບທວນຄືນ 30 ມິຖຸນາ 2025 ກີບ
ຂາຍບໍລິການໃຫ້ແກ່:		
ບໍລິສັດໃນເຄືອ		
ຄ່າເຊົ່າ	1,001,776,356	899,288,896
	1,001,776,356	**899,288,896**
ພາກສ່ວນທີ່ກ່ຽວຂ້ອງອື່ນໆ		
ລາຍຮັບດອກເບ້ຍ	1,468,494,882	1,468,494,882
ຄ່າເຊົ່າ	3,546,650,224	4,011,350,331
	5,015,145,106	**5,479,845,213**

21.2 ການຊື້ສິນຄ້າ ແລະ ບໍລິການ

	ທີ່ບທວນຄືນ 30 ມິຖຸນາ 2026 ກີບ	ທີ່ບທວນຄືນ 30 ມິຖຸນາ 2025 ກີບ
ຊື້ບໍລິການຈາກ:		
ບໍລິສັດໃນເຄືອ		
ລາຍຈ່າຍດອກເບ້ຍ	6,195,309,155	5,533,010,037
	6,195,309,155	**5,533,010,037**
ພາກສ່ວນທີ່ກ່ຽວຂ້ອງອື່ນໆ		
ລາຍຈ່າຍດອກເບ້ຍ	33,086,848,160	29,529,645,367
	33,086,848,160	**29,529,645,367**

21. ລາຍການເຄື່ອນໄຫວຂອງພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

21.3 ຍອດຄ້າງຊຳລະທີ່ເກີດຂຶ້ນຈາກການຂາຍ/ຊື້ສິນຄ້າ/ບໍລິການ

	ທີ່ບທວນຄືນ 30 ມິຖຸນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ໜີ້ຕ້ອງຮັບຈາກ:		
ໜີ້ຕ້ອງຮັບທາງການຄ້າ (ບົດອະທິບາຍຂໍ້ 5)		
ພາກສ່ວນທີ່ກ່ຽວຂ້ອງອື່ນໆ	10,049,175,034	10,049,175,034
	10,049,175,034	**10,049,175,034**
ຊັບສິນໝຸນວຽນອື່ນໆ (ບົດອະທິບາຍຂໍ້ 7)		
ບໍລິສັດໃນເຄືອ		
ໜີ້ຕ້ອງຮັບຈາກການປະກອບທຶນ	36,381,418,199	36,381,418,199
ໜີ້ຕ້ອງຮັບອື່ນໆ	16,735,053,261	16,735,053,261
	53,116,471,460	**53,116,471,460**
ຜູ້ບໍລິຫານຫຼັກ		
ໜີ້ຕ້ອງຮັບອື່ນໆຈາກສ່ວນເພີ່ມມູນຄ່າຮຸ້ນ	22,497,682,340	22,497,682,340
ໜີ້ຕ້ອງຮັບອື່ນໆຈາກການຂາຍຍານພາຫະນະ	16,149,973,862	16,149,973,862
ໜີ້ຕ້ອງຮັບດອກເບ້ຍ	-	158,228,181
	38,647,656,202	**38,805,884,383**
ພາກສ່ວນທີ່ກ່ຽວຂ້ອງອື່ນໆ		
ໜີ້ຕ້ອງຮັບ ດອກເບ້ຍ	25,263,701,797	23,756,569,739
ເງິນລ່ວງໜ້າ ໃຫ້ພາກສ່ວນທີ່ກ່ຽວຂ້ອງ	47,815,498,574	39,657,475,179
ໜີ້ຕ້ອງຮັບອື່ນໆ ຈາກການບໍລິການຄ່າເຊົ່າ	43,667,290,195	42,325,879,683
	116,746,490,566	**105,739,924,601**
ລວມໜີ້ຕ້ອງຮັບທັງໝົດ (ບົດອະທິບາຍຂໍ້ 7)	**208,510,618,228**	**197,504,052,264**
ຊັບສິນບໍ່ໝຸນວຽນອື່ນໆ (ບົດອະທິບາຍຂໍ້ 12)		
ຜູ້ບໍລິຫານຫຼັກ		
ເງິນລ່ວງໜ້າ	34,419,839,505	34,419,839,505
	34,419,839,505	**34,419,839,505**

21. ລາຍການເຄື່ອນໄຫວຂອງພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

21.3 ຍອດຄ້າງຊຳລະທີ່ເກີດຂຶ້ນຈາກການຂາຍ/ຊື້ສິນຄ້າ/ບໍລິການ (ຕໍ່)

	ທີ່ບທວນຄືນ 30 ມິຖຸນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ໜີ້ຕ້ອງສິ່ງໃຫ້ແກ່:		
ໜີ້ຕ້ອງສິ່ງການຄ້າ (ບົດອະທິບາຍຂໍ້ 13)		
ບໍລິສັດໃນເຄືອ	5,842,259,023	4,599,215,887
ພາກສ່ວນທີ່ກ່ຽວຂ້ອງອື່ນໆ	442,948,888	442,948,888
	6,285,207,911	**5,042,164,775**
ໜີ້ສິນໝຸນວຽນອື່ນໆ (ບົດອະທິບາຍຂໍ້ 16)		
ບໍລິສັດໃນເຄືອ		
ໜີ້ຕ້ອງສິ່ງຈາກການປະກອບທຶນ	56,306,694,922	56,306,694,922
ຍອດຄ້າງຊຳລະ ລາຍຈ່າຍດອກເບ້ຍ	732,838,898	37,820,793,170
ອື່ນໆ	47,374,144,068	31,084,257,343
	104,413,677,888	**125,211,745,435**
ພາກສ່ວນທີ່ກ່ຽວຂ້ອງອື່ນໆ		
ຍອດຄ້າງຊຳລະ ລາຍຈ່າຍດອກເບ້ຍ	70,907,641,330	658,206,492
ອື່ນໆ	237,694,769,057	218,179,512,310
	308,602,410,387	**218,837,718,802**
ໜີ້ລວມໜີ້ຕ້ອງສິ່ງທັງໝົດ (ບົດອະທິບາຍຂໍ້ 16)	**413,016,088,275**	**344,049,464,237**

21.4 ເງິນກູ້ຢືມຈາກພາກສ່ວນທີ່ກ່ຽວຂ້ອງ

	ທີ່ບທວນຄືນ 30 ມິຖຸນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ໃນວັນທີ 1 ມັງກອນ	860,021,981,919	826,345,447,375
ເງິນກູ້ຢືມທີ່ໄດ້ຮັບລະຫວ່າງໄລຍະ		
ເງິນກູ້ຢືມທີ່ໄດ້ຈ່າຍຊຳລະຄືນລະຫວ່າງໄລຍະ	-	(8,349,720,000)
ຂາດທຶນຈາກອັດຕາແລກປ່ຽນທີ່ຍັງບໍ່ເກີດຂຶ້ນຈິງ	2,130,962,385	42,026,254,544
	862,152,944,304	**860,021,981,919**

21. ລາຍການເຄື່ອນໄຫວຂອງພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

21.5 ເງິນໃຫ້ກູ້ຢືມແກ່ພາກສ່ວນທີ່ກ່ຽວຂ້ອງ

	ທີ່ບທວນຄືນ 30 ມິຖຸນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ໃນວັນທີ 1 ມັງກອນ	152,730,554,156	152,658,377,836
ກຳໄລຈາກອັດຕາແລກປ່ຽນທີ່ຍັງບໍ່ເກີດຂຶ້ນຈິງ	4,124,637,635	72,176,320
	156,855,191,791	**152,730,554,156**

21.6 ຄ່າຕອບແທນຂອງຜູ້ບໍລິຫານຫຼັກ

ຄ່າຕອບແທນຈ່າຍໃຫ້ຜູ້ບໍລິຫານຫຼັກມີດັ່ງລຸ່ມນີ້:

	ທີ່ບທວນຄືນ 30 ມິຖຸນາ 2026 ກີບ	ທີ່ບທວນຄືນ 30 ມິຖຸນາ 2025 ກີບ
ເງິນເດືອນ ແລະ ອື່ນໆ	2,693,106,992	2,792,997,787

22. ເຫດການທີ່ເກີດຂຶ້ນຫຼັງວັນທີປິດລາຍງານ

ບໍ່ມີເຫດການສຳຄັນໃດໆທີ່ເກີດຂຶ້ນຫຼັງວັນທີໃນເອກະສານລາຍງານການເງິນ ທີ່ຈະສົ່ງຜົນກະທົບຕໍ່ກັບຕົວເລກທີ່ສະແດງໃນເອກະສານລາຍງານການເງິນຂອງບໍລິສັດ.